ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບປິ່ນປົວ

ເລກທີ: 056 /ສວປ
ນະຄອນຫຼວງວຽງຈັນ, ວັນທີ: 21 JUN 2024

# ຄຳແນະນຳ
# ການຈັດຕັ້ງປະຕິບັດການຂຶ້ນທະບຽນ ແລະ ອອກໃບປະກອບວິຊາຊີບເພສັຊກັມ

- ອີງຕາມ ກົດໝາຍສາທາລະນະສຸກ ເລກທີ 38/ສພຊ, ລົງວັນທີ 17 ກໍລະກົດ 2023.
- ອີງຕາມ ກົດໝາຍວ່າດ້ວຍການປິ່ນປົວ (ສະບັບປັບປຸງ) ເລກທີ 48/ສພຊ, ລົງວັນທີ 20 ພະຈິກ 2023.
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ, ເລກທີ 2233/ສທ, ລົງວັນທີ 03 ສິງຫາ 2022.

ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ (ສວປ) ອອກຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ການຂຶ້ນທະບຽນ ແລະ ອອກໃບປະກອບວິຊາຊີບເພສັຊກັມ ດັ່ງນີ້:

**1. ຈຸດປະສົງ**

- ເພື່ອເຮັດໃຫ້ການເຄື່ອນໄຫວວິຊາຊີບເພສັຊກັມ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການວ່າດ້ວຍວິຊາຊີບສາທາລະນະສຸກ.
- ເພື່ອຮັບປະກັນໃຫ້ວິຊາຊີບເພສັຊກັມໄດ້ຮັບການຄຸ້ມຄອງ ແລະ ຍົກສູງຄຸນນະພາບຂອງການບໍລິການ.

**2. ນິຍາມ**

ການຂຶ້ນທະບຽນ ແລະ ອອກໃບປະກອບວິຊາຊີບເພສັຊກັມ ແມ່ນການອອກໃບປະກອບວິຊາຊີບ ໃຫ້ແກ່ຜູ້ປະກອບວິຊາຊີບເພສັຊກັມ ເພື່ອໃຫ້ສາມາດເຄື່ອນໄຫວວິຊາຊີບຂອງຕົນໄດ້ຢ່າງຖືກຕ້ອງ ຕາມລະບຽບກົດໝາຍ.

**3. ການອະທິບາຍຄຳສັບ ແລະ ຄຳຫຍໍ້**

ຄຳສັບຕ່າງໆທີ່ນຳໃຊ້ໃນຄຳແນະນຳສະບັບນີ້ ມີຄວາມໝາຍດັ່ງນີ້:

**3.1.** ວິຊາຊີບເພສັຊກັມ**:** ໝາຍເຖິງຄວາມຮູ້, ຄວາມຊຳນານງານ ທີ່ຈຳເປັນໃນການປະກອບອາຊີບກ່ຽວກັບຢາ.

**3.2.** ຜູ້ໄດ້ຮັບອະນຸຍາດພິເສດ: ໝາຍເຖິງບຸກຄົນ ຜູ້ທີ່ກະຊວງສາທາລະນະສຸກ ໄດ້ອະນຸຍາດໃຫ້ເຮັດຫ້ອງປຸງແຕ່ງຢາພື້ນເມືອງ ຫຼື ຮ້ານຂາຍຜະລິດຕະພັນຢາພື້ນເມືອງ ຫຼື ຮ້ານຂາຍຢາຂັ້ນສາມມາກ່ອນແລ້ວ.

**3.3.** ການຂຶ້ນທະບຽນ**:** ໝາຍເຖິງການບັນທຶກຂໍ້ມູນຄົບຖ້ວນຂອງເພສັຊກອນ ທີ່ໄດ້ຮັບໃບອະນຸຍາດປະກອບວິຊາຊີບ ເພສັຊ ກັມ ເຂົ້າໃນຖານຂໍ້ມູນ ຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ.

**3.4.** ໃບປະກອບວິຊາຊີບ ຫຼື ຄຳຫຍໍ້ **"ໃບວິຊາຊີບ":** ໝາຍເຖິງເອກະສານຢັ້ງຢືນ ການໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວ ວິຊາຊີບເພສັຊກັມ ຢູ່ ສປປ ລາວ ຊຶ່ງອອກໃຫ້ໂດຍ ສະພາຄຸ້ມຄອງວິຊາຊີບປິ່ນປົວ.

**3.5.** ການພັດທະນາວິຊາຊີບຕໍ່ເນື່ອງ**:** ໝາຍເຖິງການສົ່ງເສີມ, ການພັດທະນາຄວາມຮູ້ ແລະ ທັກສະໃນວິຊາຊີບຂອງຕົນຢ່າງຕໍ່ເນື່ອງໂດຍຜ່ານກິດຈະກຳຕ່າງໆດ້ານວິຊາຊີບ ເຊັ່ນ: ການຍົກລະດັບຄວາມຮູ້ ທັງໄລະຍະສັ້ນ ແລະ ຍາວ, ການເຂົ້າຮ່ວມການຝຶກອົບຮົມ, ການສຳມະນາ, ການປະຊຸມວິຊາການ, ເປັນຜູ້ສິດສອນທາງດ້ານທິດສະດີ ແລະ ພາກປະຕິບັດຕົວຈິງ, ການຄົ້ນຄວ້າວິທະຍາສາດ, ການປະກອບສ່ວນໃຫ້ສັງຄົມ, ການຮຽນຮູ້ດ້ວຍຕົນເອງ ແລະ ອື່ນໆ ຕາມການກຳນົດຂອງ ສະພາຄຸ້ມຄອງວິຊາຊີບປິ່ນປົວ.

## 4. ຂອບເຂດການນຳໃຊ້

ຄຳແນະນຳສະບັບນີ້ນຳໃຊ້ສຳລັບ ຜູ້ທີ່ມີຈຸດປະສົງຈະປະກອບວິຊາຊີບເພສັຊກັມ ຫຼື ທີ່ກຳລັງປະຕິບັດວຽກງານເພສັຊກັມ ນຳ ພາກລັດ ແລະ ເອກະຊົນ ຢູ່ໃນ ສປປ ລາວ ແລະ ເປັນບ່ອນອີງໃຫ້ແກ່ຜູ້ປະກອບວິຊາຊີບເພສັຊກັມຄົນລາວ ທີ່ມີຈຸດປະສົງຢາກໄປປະກອບວິຊາຊີບເພສັຊກັມ ຢູ່ ຕ່າງປະເທດ ຫຼື ຜູ້ປະກອບວິຊາຊີບເພສັຊກັມຄົນຕ່າງປະເທດ ທີ່ມີຈຸດປະສົງຢາກມາປະກອບວິຊາຊີບເພສັຊກັມ ຢູ່ ສປປ ລາວ.

## 5. ກຸ່ມເປົ້າໝາຍ

**5.1.** ຜູ້ສຳເລັດການສຶກສາຫຼັກສູດເພສັຊສາດ ລະດັບອະນຸປະລິນຍາຂຶ້ນໄປ ທີ່ເປັນຄົນລາວ.

**5.2.** ຜູ້ສຳເລັດການສຶກສາວິຊາເພສັຊສາດ ລະດັບປະລິນຍາຕີຂຶ້ນໄປ ສຳລັບຄົນຕ່າງປະເທດ.

**5.3.** ຜູ້ທີ່ໄດ້ຮັບອະນຸຍາດພິເສດ ຈາກກະຊວງສາທາລະນະສຸກ ໃຫ້ເຄື່ອນໄຫວວິຊາຊີບເພສັຊກັມ.

## 6. ເງື່ອນໄຂ

**6.1.** ຜູ້ທີ່ສຳເລັດການສຶກສາຫຼັກສູດເພສັຊສາດ ລະດັບອະນຸປະລິນຍາຂຶ້ນໄປ ແລະ ຜູ້ທີ່ໄດ້ຮັບອະນຸຍາດພິເສດ ຈາກກະຊວງສາທາ ລະນະສຸກ ໃຫ້ເຄື່ອນໄຫວວິຊາຊີບເພສັຊກັມກ່ອນປີ 2024 ທີ່ເປັນຄົນລາວຈະໄດ້ຮັບການອອກໃບວິຊາຊີບແບບອັດຕະໂນມັດ.

**6.2.** ສ່ວນຜູ້ທີ່ສຳເລັດການສຶກສາຫຼັກສູດເພສັຊສາດ ລະດັບອະນຸປະລິນຍາຂຶ້ນໄປ ແລະ ຜູ້ທີ່ໄດ້ຮັບອະນຸຍາດພິເສດ ຈາກກະຊວງ ສາທາລະນະສຸກ ໃຫ້ເຄື່ອນໄຫວວິຊາຊີບເພສັຊກັມ ແຕ່ປີ 2024 ຂຶ້ນໄປ ຈະໄດ້ຜ່ານການສອບເສັງລະດັບຊາດ ຈຶ່ງຈະໄດ້ຮັບ ໃບປະກອບວິຊາຊີບ.

**6.3.** ໃບປະກອບວິຊາຊີບເພສັຊກັມມີອາຍຸຫ້າປີ ແລະ ຜູ້ທີ່ຈະຕໍ່ອາຍຸໃບປະກອບວິຊາຊີບຈະຕ້ອງຍົກລະດັບອາຊີບຕໍ່ເນື່ອງຕາມຮູບ ແບບຕ່າງໆທີ່ກ່ຽວຂ້ອງກັບວິຊາຊີບ ຊຶ່ງຈັດໂດຍອົງການຕ່າງໆ ແລະ ມີການຮັບຮອງຈາກສະພາຄຸ້ມຄອງວິຊາຊີບປິ່ນປົວ. ຜູ້ເຂົ້າຮ່ວມໃນການຝຶກອົບຮົມຈະຕ້ອງໄດ້ສະສົມຄະແນນຄົບຕາມຈຳນວນ ທີ່ທາງສະພາຄຸ້ມຄອງວິຊາຊີບປິ່ນປົວກຳນົດອອກ.

## 7. ຂັ້ນຕອນການຈັດຕັ້ງປະຕິບັດການຂຶ້ນທະບຽນ ແລະ ອອກໃບປະກອບວິຊາຊີບເພສັຊກັມ

**7.1.** ສະພາຄຸ້ມຄອງວິຊາຊີບປິ່ນປົວ ຈະໄດ້ເຜີຍແຜ່ຄຳແນະນຳ ແລະ ແຈ້ງການໃຫ້ສາຂາສະພາຄຸ້ມຄອງວິຊາຊີບປິ່ນປົວພາກສ່ວນອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ, ທັງພາກລັດ ແລະ ເອກະຊົນ ໃນທົ່ວປະເທດກ່ຽວກັບຂັ້ນຕອນຈັດຕັ້ງປະຕິບັດການອອກໃບປະກອບວິຊາຊີບເພສັຊກັມ.

**7.2.** ຜູ້ທີ່ມີຈຸດປະສົງຢາກຂໍໃບປະກອບວິຊາຊີບເພສັຊກັມແມ່ນປະຕິບັດ ດັ່ງນີ້:

**1)** ດາວໂຫຼດເອົາແບບຟອມຄຳຮ້ອງໃບປະກອບວິຊາຊີບຈາກເວບໄຊທ໌ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ, ເວບ ໄຊຂອງກົມອາຫານ ແລະ ຢາ ຫຼື ຄະນະເພສັຊສາດ ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ຫຼື ຂໍແບບຟອມຈາກຫ້ອງ ການບໍລິຫານສາທາລະນະສຸກເມືອງ, ຫ້ອງການພະແນກສາທາລະນະສຸກແຂວງ, ນະຄອນຫຼວງວຽງຈັນ ຫຼື ຫ້ອງການສະ ພາຄຸ້ມຄອງວິຊາຊີບປິ່ນປົວ ທີ່ ນະຄອນຫຼວງວຽງຈັນ.

**2)** ປະກອບຂໍ້ມູນ ແລະ ເອກະສານຕ່າງໆ ຕາມທີ່ແບບຟອມໄດ້ກຳນົດໃຫ້.

**3)** ຍື່ນແບບຟອມພ້ອມດ້ວຍເອກະສານຕ່າງໆ ທີ່ຫ້ອງການບໍລິຫານສາທາລະນະສຸກເມືອງ, ຫ້ອງການພະແນກສາທາລະນະ ສຸກແຂວງ ຫຼື ນະຄອນຫຼວງວຽງຈັນ ຫຼື ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ ທີ່ ນະຄອນຫຼວງ ວຽງຈັນ.

**4)** ຄະນະກຳມະການຄຸ້ມຄອງຜູ້ປະກອບວິຊາຊີບຂັ້ນເມືອງ ແລະ ແຂວງ ຮັບຜິດຊອບ ຮັບ ແລະ ກວດກາເອກະສານ ໃຫ້ຄົບ ຖ້ວນ; ໃນກໍລະນີເອກະສານບໍ່ຄົບຖ້ວນຕ້ອງໄດ້ສົ່ງໃຫ້ເຈົ້າຂອງເອກະສານເພື່ອໄປປັບປຸງຄືນໃໝ່.

5) ເອກະສານທີ່ຖືກຕ້ອງ, ຄົບຖ້ວນ ແລະ ສົມບູນແລ້ວ ແມ່ນສົ່ງໃຫ້: ຄະນະກຳມະການຄຸ້ມຄອງຜູ້ປະກອບວິຊາຊີບ ຂັ້ນແຂວງສັງລວມເອກະສານທັງໝົດຄົບຊຸດ ແລ້ວສົ່ງໃຫ້ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ ທີ່ນະຄອນຫຼວງວຽງຈັນ ທຸກໆສາມເດືອນ.

6) ສະພາຄຸ້ມຄອງວິຊາຊີບປິ່ນປົວ ກະກຽມຄວາມພ້ອມທຸກດ້ານ ເພື່ອຮອງຮັບການຂຶ້ນທະບຽນ ແລະ ອອກໃບປະກອບວິຊາຊີບເພສັຊກັມ.

## 8. ຂັ້ນຕອນການພິຈາລະນາອະນຸມັດໃບປະກອບວິຊາຊີບເພສັຊກັມ

**8.1.** ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ (ຫ້ອງການ ສອປ) ສັງລວມ ແລະ ຄັດແຍກເອກະສານ ສົ່ງໃຫ້ຄະນະກຳ ມະການວິຊາຊີບເພສັຊກັມ ເພື່ອຄົ້ນຄວ້າ, ພິຈາລະນາ ແລະ ນຳສະເໜີ ໃຫ້ສະພາຄຸ້ມຄອງວິຊາຊີບປິ່ນປົວ ຮັບຮອງ.

**8.2.** ເມື່ອໄດ້ຮັບຮອງແລ້ວ, ຫ້ອງການ ສອປ ຕ້ອງໄດ້ດຳເນີນຂັ້ນຕອນການຂຶ້ນທະບຽນບຸກຄົນ ໃຫ້ຜູ້ປະກອບວິຊາຊີບ ຢ່າງຖືກ ຕ້ອງຕາມກົດໝາຍ ແລະ ຈັດກຽມໃບປະກອບວິຊາຊີບເພສັຊກັມ ໃຫ້ທ່ານປະທານເຊັນຮັບຮອງ.

## 9. ກົນໄກສຳລັບຜູ້ປະກອບວິຊາຊີບເພສັຊກັມຄົນຕ່າງປະເທດ

**9.1.** ຄົນຕ່າງປະເທດທີ່ດຳລົງຊີວິດຢູ່ ສປປ ລາວ ສະພາຄຸ້ມຄອງວິຊາຊີບປິ່ນປົວ ຈະໄດ້ພິຈາລະນາແຕ່ການຂຶ້ນທະບຽນ ແລະ ອອກໃບປະກອບວິຊາຊີບເພສັຊກັມຊົ່ວຄາວ (Temporary license) ເທົ່ານັ້ນ.

**9.2.** ເງື່ອນໄຂການຂຶ້ນທະບຽນ ແລະ ອອກໃບປະກອບວິຊາຊີບເພສັຊກອນ ທີ່ເປັນຄົນຕ່າງປະເທດມີດັ່ງລຸ່ມນີ້:

1) ມີປະກາສະນິຍະບັດຮຽນຈົບຫຼັກສູດວິຊາເພສັຊສາດ ລະດັບປະລິນຍາຕີຂຶ້ນໄປ ໂດຍສະຖານການສຶກສາທີ່ກ່ຽວຂ້ອງຈາກ ປະເທດທີ່ກ່ຽວຂ້ອງທີ່ສຳເລັດການສຶກສາ.
2) ມີໃບປະກອບວິຊາຊີບເພສັຊກັມຂອງປະເທດຕົນ (ປະເທດຕົ້ນທາງ) ທີ່ນຳໃຊ້ໄດ້ຢ່າງໜ້ອຍຫົກເດືອນ ກ່ອນເຮັດວຽກໃນ ສປປ ລາວ.
3) ມີເອກະສານຢັ້ງຢືນປະສົບການເຮັດວຽກການບໍລິການ ດ້ານເພສັຊກັມ ຢູ່ປະເທດຕົ້ນທາງຕິດຕໍ່ກັນຫ້າປີ.
4) ມີໃບຢັ້ງຢືນຮັບເອົາມາເຮັດວຽກຈາກການຈັດຕັ້ງ ຫຼື ສະຖານທີ່ ທີ່ຈະປະກອບວິຊາຊີບເພສັຊກັມ.
5) ຮູ້ເວົ້າ ແລະ ເຂົ້າໃຈພາສາລາວໄດ້ໃນລະດັບດີ.
6) ມີວີຊ່າ (Visa) ແລະ ມີໃບອະນຸຍາດໃຫ້ເຮັດວຽກ, ຫ້າມນຳໃຊ້ວີຊ່າທ່ອງທ່ຽວ.
7) ໃຫ້ມີປະກັນໄພຄຸ້ມຄອງຜູ້ມາໃຊ້ບໍລິການ ກ່ຽວກັບການປະຕິບັດໜ້າທີ່ ທີ່ຜິດພາດທາງດ້ານວິຊາການ (Malpractice Insurance).
8) ກໍລະນີທີ່ຄົນຕ່າງປະເທດແຕ່ງງານກັບຄົນລາວ ທີ່ຖືກຕ້ອງຕາມກົດໝາຍ ແລະ ດຳລົງຊີວິດຢູ່ ສປປ ລາວ ແຕ່ບໍ່ໄດ້ຕັດສັນຊາດ ຈະຖືກປະຕິບັດຄືກັບຄົນລາວ.

**9.3.** ຂັ້ນຕອນການຍື່ນເອກກະສານ ແມ່ນໃຫ້ຍື່ນເອກກະສານທີ່ປະກອບຄົບຖ້ວນ ຕາມທີ່ລະບຸໃນເອກກະສານຊ້ອນທ້າຍ 02 ແລ້ວສົ່ງຕໍ່ໃຫ້ ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວໂດຍກົງ ຫຼື ສົ່ງເອກກະສານດັ່ງກ່າວໃຫ້ສະຖານທີ່ບໍລິການປິ່ນປົວ ບ່ອນທີ່ຕົນເອງຈະສັງກັດ ແລ້ວສົ່ງໃຫ້ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ.

**9.4.** ສະພາຄຸ້ມຄອງວິຊາຊີບປິ່ນປົວ ຂອງ ສປປ ລາວ ແລະ ຄະນະກຳມະການວິຊາຊີບທີ່ກ່ຽວຂ້ອງ ຈະສຶກສາ/ຄົ້ນຄວ້າເອກະສານ ແລະ ພິຈາລະນາໃຫ້ຄຳຕອບພາຍໃນ 06-08 ອາທິດ.

**9.5.** ຜູ້ປະກອບວິຊາຊີບເພສັຊກັມ ທີ່ມີຈຸດປະສົງເຂົ້າມາຊ່ວຍເຫຼືອດ້ານວິຊາການ, ດ້ານມະນຸດສະທຳ ຫຼື ເປັນອາສາສະໝັກຊ່ວຍ ເຫຼືອລ້າໃນນາມໂຄງການທັງພາກລັດ ແລະ ເອກະຊົນຈາກຕ່າງປະເທດ, ການຈັດຕັ້ງທີ່ກ່ຽວຂ້ອງຕ້ອງສະເໜີ ຂໍຂຶ້ນທະບຽນ ເປັນຜູ້ປະກອບວິຊາຊີບ ແລະ ຈະໄດ້ຮັບໃບປະກອບວິຊາຊີບຊົ່ວຄາວ ສະເພາະຈາກສະພາຄຸ້ມຄອງວິຊາຊີບປິ່ນປົວ.

**9.6.** ການຕໍ່ອາຍຸໃບປະກອບວິຊາຊີບເພສັຊກັມ ຜູ້ປະກອບວິຊາຊີບເພສັຊກັມແບບສ່ວນຕົວ, ຊ່ວຍເຫຼືອດ້ານມະນຸດສະທຳ ຫຼື ເປັນອາສາສະໝັກຊ່ວຍເຫຼືອລ້າ ຕ້ອງການຕໍ່ອາຍຸໃບປະກອບວິຊາຊີບເພສັຊກັມຊົ່ວຄາວ ຢູ່ ສປປ ລາວ ສາມາດຕໍ່ໄດ້ຫຼາຍຄັ້ງ, ແຕ່ຕ້ອງປະກອບເອກະສານ ດັ່ງນີ້:

1) ໜັງສືສະເໜີຈາກສະຖານທີ່ບໍລິການດ້ານເພສັຊກັມ ບ່ອນທີ່ຕົນປະຕິບັດວິຊາຊີບເພສັຊກັມ;
2) ສຳເນົາໜັງສືຜ່ານແດນ;
3) ສຳເນົາບັດອະນຸຍາດພັກເຊົາຊົ່ວຄາວ ຫຼື ໃບຢັ້ງຢືນບ່ອນພັກເຊົາ ຢູ່ ສປປ ລາວ;
4) ສຳເນົາໃບອະນຸມັດປະຕິບັດງານຢູ່ ສປປ ລາວ ສະບັບກ່ອນ;
5) ບົດລາຍງານການປະເມີນຜົນ ການປະຕິບັດວິຊາຊີບໄລຍະຜ່ານມາຕາມແບບຟອມ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ນະສຸກ ແລະ ເຊັນຮັບຮອງໂດຍສະຖານບໍລິການຕົ້ນສັງກັດ ຫຼື ການຈັດຕັ້ງທີ່ເຊີນມາ;
6) ຕ້ອງໄປຕໍ່ອາຍຸໃບປະກອບວິຊາຊີບ ຈາກປະເທດຕົ້ນທາງກ່ອນຈະໝົດອາຍຸ ຫົກເດືອນ.

**9.7.** ກໍລະນີເກີດໄພພິບັດສຸກເສີນ: ທີມອາສາສະໝັກຜູ້ປະກອບວິຊາຊີບຄົນຕ່າງປະເທດ ທີ່ມີຈຸດປະສົງຢາກຊ່ວຍເຫຼືອດ້ານມະນຸດ ສະທຳ ໃນໄລຍະເກີດໄພພິບັດສຸກເສີນ ໃຫ້ແຈ້ງເຈດຈຳນົງຕໍ່ກະຊວງການຕ່າງປະເທດ ຫຼື ຄະນະກຳມະການຮັບຜິດຊອບໄພ ພິບັດແຫ່ງຊາດ ຊຶ່ງຕ້ອງປະສານສົມທົບ ກັບ ກະຊວງສາທາລະນະສຸກ ແລະ ສະພາຄຸ້ມຄອງວິຊາຊີບປິ່ນປົວ ເພື່ອອຳນວຍຄວາມສະດວກ ຄອນຍົກເວັ້ນຂັ້ນຕອນ ແລະ ລະບຽບການຕ່າງໆ.

## 10. ໜ້າທີ່ ແລະ ພັນທະ ຂອງ ຜູ້ປະກອບວິຊາຊີບເພສັຊກັມທີ່ໄດ້ຂຶ້ນທະບຽນ

ຜູ້ປະກອບວິຊາຊີບເພສັຊກັມ ທີ່ ໄດ້ຮັບການຂຶ້ນທະບຽນ, ຖືວ່າເປັນສະມາຊິກ ຂອງ ສະພາຄຸ້ມຄອງວິຊາຊີບປິ່ນປົວ ຂອງກະຊວງສາທາລະນະສຸກ, ຕ້ອງມີຄວາມຮັບຜິດຊອບຕໍ່ການປະຕິບັດວຽກງານເພສັຊກັມ ຕາມມາດຕະຖານການບໍລິການ ແບບມືອາຊີບຄຽງຄູ່ກັບຈັນຍາບັນວິຊາຊີບ, ການພັດທະນາວິຊາຊີບຕໍ່ເນື່ອງ ແລະ ເຊີດຊູຄວາມເປັນເຈົ້າການ, ປົກປ້ອງກຽດ ສັກສີຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ, ເປັນຕົວແບບດ້ານວິຊາຊີບ. ນອກຈາກນີ້ ຍັງຕ້ອງປະຕິບັດພັນທະອາກອນ ຕາມລະບຽບການ, ເຄົາລົບ ແລະ ປະຕິບັດລະບຽບກົດໝາຍ, ວັດທະນະທຳ ແລະ ຮີດຄອງປະເພນີຂອງ ສປປ ລາວ.

## 11. ຂໍ້ຫ້າມສຳລັບຜູ້ປະກອບວິຊາຊີບເພສັຊກັມ

ຫ້າມຜູ້ປະກອບວິຊາຊີບເພສັຊກັມໃຫ້ຜູ້ອື່ນນຳໃຊ້ ຫຼື ເຊົ່າ ໃບປະກອບວິຊາຊີບເພສັຊກັມຂອງຕົນ, ເນື່ອງຈາກວ່າໃບປະກອບວິຊາຊີບເພສັຊກັມ ເປັນເອກະສານສິດຂອງບຸກຄົນ ແລະ ກ່ຽວຂ້ອງກັບຄວາມປອດໄພຕໍ່ຊີວິດຂອງຜູ້ມາໃຊ້ບໍລິການ. ຂໍ້ຫ້າມອື່ນໃຫ້ປະຕິບັດຕາມຂໍ້ຫ້າມ ຂອງກົດໝາຍວ່າດ້ວຍການປິ່ນປົວ (ສະບັບປັບປຸງ) ເລກທີ 48/ສພຊ, ລົງວັນທີ 20 ພະຈິກ 2023.

## 12. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຕໍ່ຄຳແນະນຳສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ໂຈະ ຫຼື ຖອນໃບປະກອບວິຊາຊີບເພສັຊກັມ, ຖືກປັບໃໝ, ໃຊ້ແທນທາງແພ່ງ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ, ລາຍລະອຽດຈະມີລະບຽບການສະເພາະ.

## 13. ການຈັດຕັ້ງປະຕິບັດ

ໃຫ້ຄະນະກຳມະການສະພາຄຸ້ມຄອງວິຊາຊີບປິ່ນປົວ, ຄະນະກຳມະການຄຸ້ມຄອງວິຊາຊີບເພສັຊກັມ, ຫ້ອງການກະ ຊວງສາທາລະນະສຸກ, ກົມຈັດຕັ້ງ ແລະ ພະນັກງານ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມອາຫານ ແລະ ຢາ, ມະຫາວິທະຍາ ໄລວິທະຍາສາດສຸຂະພາບ, ບັນດາກົມກອງອື່ນທີ່ກ່ຽວຂ້ອງ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ, ຫ້ອງການສາທາລະນະສຸກເມືອງ, ສະຖານການສຶກສາສາທາລະນະສຸກ, ໂຮງໝໍ, ສູນ, ສະຖາບັນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ຕາມໜ້າທີ່ຂອງໃຜລາວຢ່າງເຂັ້ມງວດ.

**14. ຜົນສັກສິດ**

ຄຳແນະນຳສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ຂໍ້ກຳນົດກົດລະບຽບໃດທີ່ຂັດກັບຄຳແນະນຳສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ

ສຈ. ດຣ. ປອນເມກ ດາລາລອຍ

ເອກະສານຊ້ອນທ້າຍ **1 :** ລາຍການເອກະສານທີ່ຈະປະກອບສຳລັບຜູ້ປະກອບວິຊາຊີບເພສັຊກັມຄົນລາວ

| | | |
|---|---|---|
| 1. | ໃບຄຳຮ້ອງ | 01 ສະບັບ(ມີຮ່າງໃຫ້) |
| 2. | ຊີວະປະຫວັດຫຍໍ້ | 01 ສະບັບ(ມີຮ່າງໃຫ້) |
| 3. | ໃບຢັ້ງຢືນການເຄື່ອນໄຫວວິຊາຊີບ ເພສັຊກັມພາກລັດ ຫຼື ເອກະຊົນ | 01 ສະບັບ |
| 4. | ໃບຢັ້ງຢືນທີ່ຢູ່ | 01 ສະບັບ |
| 5. | ໃບຢັ້ງຢືນສຸຂະພາບ | 01 ສະບັບ |
| 6. | ໃບແຈ້ງໂທດ (ເລກທີ 3) | 01 ສະບັບ |
| 7. | ສຳເນົາບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ | 01 ສະບັບ |
| 8. | ຮູບຂະໜາດ 4 x 6 (ຖ່າຍບໍ່ເກີນ 6 ເດືອນ) | 04 ໃບ |

ເອກະສານຊ້ອນທ້າຍ **2:** ເງື່ອນໄຂການພິຈາລະນາອອກໃບປະກອບວິຊາຊີບ

1. ກວດເບິ່ງ ລາຍການເອກກະສານ ໃຫ້ຄົບຖ້ວນ;
2. ສົມທຽບໜ້າວຽກຕົວຈິງໃສ່ກັບ ວຸດທິການສຶກສາໃຫ້ ກົງກັນ;
3. ດ້ານສຸຂະພາບຮ່າງກາຍຜູ້ກ່ຽວ (ມີພະຍາດຕິດແປດບໍ່?);
4. ມີຄວາມຮັບຜິດຊອບ ແລະ ຫ້າວຫັນໃນການປະຕິບັດວຽກງານ;
5. ມີຄະດີ ຫຼື ຂໍ້ຜິດພາດທາງດ້ານວິຊາການ ຫຼື ບໍ່?
6. ມີຄະດີ ຫຼື ຂໍ້ຜິດພາດທາງດ້ານຈັນຍາບັນ/ຈັນຍາທຳ ຫຼື ບໍ່?
7. ເຄົາລົບ, ນັບຖື ລະບຽບກົດໝາຍ ຫຼື ບໍ່?

ເອກະສານຊ້ອນທ້າຍ **3:** ລາຍການເອກະສານທີ່ຈະປະກອບສຳລັບຜູ້ປະກອບວິຊາຊີບເພສັຊກັມຄົນຕ່າງປະເທດ

| | | |
|---|---|---|
| 1. | ໃບຄຳຮ້ອງ | 01 ສະບັບ(ມີຮ່າງໃຫ້) |
| 2. | ຊີວະປະຫວັດຫຍໍ້ | 01 ສະບັບ(ມີຮ່າງໃຫ້) |
| 3. | ສຳເນົາໃບອະນຸຍາດປະກອບວິຊາຊີບປິ່ນປົວ ຈາກປະເທດຕົ້ນທາງ | 01 ສະບັບ |
| 4. | ສຳເນົາໜັງສືຜ່ານແດນ (Passport) ພ້ອມວິຊ້າ | 01 ສະບັບ |
| 5. | ໃບຢັ້ງຢືນສຸຂະພາບ ຈາກປະເທດຕົ້ນທາງ | 01 ສະບັບ |
| 6. | ໃບຢັ້ງຢືນປະສົບການເຮັດວຽກເພສັຊກັມ | 01 ສະບັບ |
| 7. | ໃບຢັ້ງຢືນຈາກສະຖານທີ່ບໍລິການ ທີ່ຈະມາເຮັດວຽກ | 01 ສະບັບ |
| 8. | ສຳເນົາໃບຢັ້ງຢືນການເວົ້າ, ອ່ານ, ຂຽນພາສາລາວ ຫຼື ອັງກິດ | 01 ສະບັບ |
| 9. | ໃບຢັ້ງຢືນຮັບປະກັນຈາກ ບຸກຄົນ ຫຼື ອົງການຈັດຕັ້ງ | 01 ສະບັບ |
| 10. | ໃບປະກັນໄພ Malpractice Insurance | 01 ສະບັບ |
| 11. | ໃບແຈ້ງໂທດ | 01 ສະບັບ |
| 12. | ສຳເນົາປະກາສະນີຍະບັດຢັ້ງຢືນວຸດທິການສຶກສາ | 01 ສະບັບ |
| 13. | ຮູບຂະໜາດ 4 x 6 (ຖ່າຍບໍ່ເກີນ 6 ເດືອນ) | 04 ໃບ |